# ໂຮງຮຽນວັນອາທິດ
## ວັນອາທິດ ທີ 13 ເດືອນມີນາ 2022 (03-13-2022)

---

## ຊີວິດຂອງຄວາມຈົງຮັກພັກດີ

*ເມື່ອເອີ່ຍເຖິງບຸກຄົນທີ່ຈົງຮັກພັກດີແມ່ນໃຜທີ່ທ່ານຄິດເຫັນ?*

**ຈຸດສຳຄັນໃນບົດຮຽນ:** ການເຊື່ອມຕໍ່ກັນກັບພຣະຄຣິດຮຽກຮ້ອງໃຫ້ມີຄວາມຈົງຮັກພັກດີຢ່າງຕໍ່ເນື່ອງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າບໍ່ເຄີຍພົບກັບຜູ້ໃດທີ່ຊື່ວ່າ "ຢູດາ" ພັນລະຍາຂອງຂ້າພະເຈົ້າແລະຂ້າພະເຈົ້າມີລູກສາມຄົນ, ດັ່ງນັ້ນໃນສາມຄັ້ງທີ່ພວກເຮົາໄດ້ລະດົມຄວາມຄິດກ່ຽວກັບຊື່ຂອງລູກທີ່ເປັນຊະມາຊິກໃໝ່ທີ່ເຂົ້າມາໃນໂລກໃບນີ້. ຢູດາ ຊື່ນີ້ບໍ່ເຄີຍເຫັນໃນບັນຊີລາຍຊື່. ເຖິງແມ່ນວ່າຢູ່ໃນຍຸກທີ່ມີຂໍ້ຈຳກັດຂອງຄວາມຄິດສ້າງສັນກັບການຕັ້ງຊື່ເດັກໄດ້ຍືດຍາວໄປ, ພວກເຮົາພຽງແຕ່ບໍ່ພົບກັບເດັກນ້ອຍຊື່ ຢູດາ. ນັ້ນຍ້ອນວ່າ ຢູດາ ເປັນຜູ້ທໍລະຍົດທີ່ມີຊື່ສຽງທີ່ສຸດໃນປວັດສາດທີ່ຊົ່ວຮ້າຍຂອງມະນຸດ. ລາວບໍ່ໄດ້ພຽງແຕ່ທໍລະຍົດໃຜຜູ້ນຶ່ງ; ລາວໄດ້ທໍລະຍົດຕໍ່ພຣະເຈົ້າແລະໄດ້ຊັກຈູງພຣະຜູ້ຊ່ວຍໃຫ້ລອດຂອງໂລກເຂົ້າມາໃກ້ກັບການຖືກຄຶງໄວ້. ຢູດາ ອາດຈະເປັນຊື່ທີ່ບໍ່ທັມມະດາ, ແຕ່ການທໍລະຍົດແມ່ນເປັນພຶດຕິກັມທົ່ວໆໄປ. ພວກເຮົາພົບກັບມັນຢູ່ໃນເກືອບທຸກພື້ນທີ່ຂອງຊີວິດ. ບາງຄັ້ງພວກເຮົາພົບມັນຢູ່ໃນຊີວິດຂອງເຮົາເອງ. ພວກເຮົາອາດຈະພົບກັບມັນໃນຊີວິດຂອງໄພ່ພົນຂອງພຣະເຈົ້າ. ໃນໂຢຮັນ 13 ພວກເຮົາຈະພົບກັບ ຢູດາ, ແຕ່ພວກເຮົາຍັງເຫັນພຣະເຢຊູ. ພວກເຮົາຈະໄດ້ເຫັນພຣະຣັສມີຂອງ ພຣະອົງ, ແມ່ນແຕ່ໃນໂອກາດທີ່ໂສກເສົ້າ. ພວກເຮົາຍັງຈະມີໂອກາດທີ່ຈະຟື້ນຟູຄວາມຈົງຮັກພັກດີຂອງຕົນເອງຕໍ່ພຣະເຢຊູດັ່ງທີ່ພວກເຮົາສແວງຫາທີ່ຈະດຳເນີນຊີວິດທີ່ເຊື່ອມຕໍ່ກັບພຣະອົງ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ສຶກສາພຣະຄັມພີ

### 1. ໂຢຮັນ: 13:21-27

*21. ເມື່ອພຣະເຢຊູຊົງກ່າວດັ່ງນັ້ນແລ້ວພຣະອົງກໍຊົງວຸ້ນວາຍໃນພຣະທັຍ ແລະຊົງກ່າວເປັນພະຍານວ່າ, "ເຮົາບອກພວກທ່ານຕາມຄວາມຈິງວ່າ ຄົນໜຶ່ງໃນພວກທ່ານຈະທໍລະຍົດຕໍ່ເຮົາ." 22. ພວກສາວົກກໍເບິ່ງໜ້າກັນແລະສົງສັຍວ່າ ຄົນທີ່ພຣະອົງກ່າວເຖິງນັ້ນຄືຜູ້ໃດ. 23. ມີສາວົກຄົນໜຶ່ງທີ່ພຣະເຢຊູຊົງຮັກໄດ້ເນີ້ງກາຍລົງອີງພຣະຊວງຂອງພຣະອົງ. 24. ຊີໂມນເປໂຕຈຶ່ງຍົກໜ້າໃສ່ສາວົກຜູ້ນັ້ນກ່າວວ່າ, "ຈົ່ງຖາມວ່າຄົນທີ່ເພິ່ນເວົ້ານັ້ນແມ່ນຜູ້ໃດ." 25. ຂນະທີ່ຍັງອີງພຣະຊວງຂອງພຣະອົງສາວົກຜູ້ນັ້ນກໍທູນຖາມວ່າ, ນາຍເຈົ້າເອີຍ, ແມ່ນຜູ້ໃດ." 26. ພຣະເຢຊູຊົງຕອບວ່າ, "ເຮົາຈະເອົາອາຫານຄຳນີ້ຈ້ຳແລ້ວຍື່ນໃຫ້ຜູ້ໃດ ກໍແມ່ນຜູ້ນັ້ນແຫລະ" ເມື່ອຊົງຈ້ຳອາຫານຄຳນັ້ນແລ້ວ ພຣະອົງຊົງຍື່ນໃຫ້ແກ່ຢູດາລູກຊີໂມນອິສະກາຣີອົດ. 27. ຫຼັງຈາກຢູດາໄດ້ກິນອາຫານຄຳນັ້ນແລ້ວ ຊາຕານຈຶ່ງເຂົ້າຢູ່ໃນໃຈລາວ ພຣະເຢຊູຈຶ່ງຊົງບອກຢູດາວ່າ, "ອັນທີ່ທ່ານຈະເຮັດນັ້ນກໍຈົ່ງເຮັດໄວໆ ແມ."*

ໂຢຮັນ 13 ເລີ້ມຕົ້ນດ້ວຍເຣື່ອງລາວກ່ຽວກັບການຊຸມນຸມເປັນຄັ້ງສຸດທ້າຍຂອງພຣະເຢຊູກັບພວກອັຄສາວົກຂອງພຣະອົງກ່ອນທີ່ພຣະອົງຈະຖືກຄຶງ, ແລະມັນເປັນຊ່ວງເວລາອຶດອັດໃຈ, ທັງເປັນເວລາແຫ່ງຄວາມເຈັບປວດ. ພວກເຮົາທຸກຄົນເຄີຍຮ່ວມຢູ່ໃນການປະຊຸມທີ່ກ່ຽວຂ້ອງກັບການປະຊຸມສົນທະນາທີ່ບໍ່ສະດວກສະບາຍ. ການກ່າວຫາທີ່ໂຫດຮ້າຍ, ຫຼືການໃຊ້ກ້ອງ

ຖ່າຍພາບບັນທຶກໃນກອງປະຊຸມ. ແຕ່ສົນທະນາລະຫ່ວາງພຣະເຢຊູແລະກັບລູກສິດຂອງພຣະອົງທີ່ພຣະອົງຊົງເລືອກໄວ້ທີ່ຈະປ່ຽນແປງໂລກຈາກການລ້າງຕີນແລະການເປັນຜູ້ນຳໄດ້ຜັນປ່ຽນມາບອກກ່ຽວການທໍລະຍົດ. ພຣະເຢຊູກ່າວວ່າ, "ເຮົາບອກພວກເຈົ້າຕາມຄວາມຈິງວ່າຜູ້ນຶ່ງໃນພວກເຈົ້າຈະທໍລະຍົດຕໍ່ເຮົາ." ທ່ານຈະສາມາດວາດພາບອອກບໍກັບການທີ່ເຈົ້ານາຍຂອງທ່ານປະກາດແບບນັ້ນໃນກອງປະຊຸມ? ຫຼືວ່າຄຣູຝຶກທີມນັກກິລາຂອງລູກຂອງທ່ານ. ປະຕິກິລິຍາຂອງພວກສາວົກແມ່ນຄືກັນກັບສິ່ງທີ່ທ່ານຄາດຄິດໄວ້. ໂດຍບໍ່ຄຳນຶງເຖິງສະພາບການຂອງກອງປະຊຸມ. ເຂົາເຈົ້າຕ້ອງການທີ່ຈະຮູ້ວ່າຈະເປັນໃຜ. ໃຜເປັນຜູ້ທໍລະຍົດ? ເຫັນໄດ້ຊັດເຈນວ່າພວກອັຄສາວົກສັບສົນ. ຖ້ານີ້ແມ່ນກອງປະຊຸມຂອງໂລກປະຈຸບັນທີ່ທັນສມັຍເຂົາອາດຈະສົ່ງຂໍ້ຄວາມຫາເຊິ່ງກັນແລະກັນເພື່ອພະຍາຍາມຊອກຫາສິ່ງທີ່ເກີດຂຶ້ນ. ທີ່ຈິງເປໂຕໄດ້ໃຫ້ສັນຍານຕໍ່ໂຢຮັນຜູ້ທີ່ນັ່ງຢູ່ໃກ້ຊິດກັບພຣະເຢຊູເພື່ອໃຫ້ຮູ້ວ່າພຣະອົງກຳລັງເວົ້າເຖິງໃຜ.

ໂຢຮັນໄດ້ຖາມຫາຕົວບຸກຄົນຜູ້ທີ່ຈະທໍລະຍົດ, ແລະໃນຄຳຕອບ, ພຣະເຢຊູໄດ້ຈຸ່ມເຂົ້າຈີ່ໃສ່ຖ້ວຍອາຫານທີ່ເຂົາກິນຮ່ວມກັນແລະຍື່ນເຂົ້າຈີ່ນັ້ນໃຫ້ຢູດາ. "ຫຼັງຈາກຢູດາກິນເຂົ້າຈີ່, ຊາຕານໄດ້ເຂົ້າສິງໃນໂຕຂອງລາວ"(ຂໍ້ 27), ພຣະເຢຊູຈຶ່ງຊົງບອກຢູດາວ່າ, "ອັນທີ່ທ່ານຈະເຮັດນັ້ນກໍຈົ່ງເຮັດໄວໆແມ. ນີ້ແມ່ນຄັ້ງດຽວໃນຂ່າວປະເສີດໂຢຮັນທີ່ຊາຕານໄດ້ຖືກກ່າວເຖິງໂດຍຊື່, ແຕ່ໂຢຮັນບໍ່ຕ້ອງການໃຫ້ຜູ້ອ່ານຂອງທ່ານເຂົ້າໃຈຜິດວ່າຜູ້ໃດທີ່ມີອິດທິພົນຕໍ່ການທໍລະຍົດຕໍ່ພຣະຄຣິດ.

ອຳນາດຂອງຊາຕານແມ່ນບໍ່ສາມາດຮູ້ໄດ້ຈະແຈ້ງ. ສິ່ງທີ່ເຫັນໄດ້ຊັດເຈນແມ່ນລະດັບຂັ້ນຕອນຂອງຄວາມບໍ່ຈົງຮັກພັກດີ. "ພວກສາວົກເລີ່ມສົງສັຍເຊິ່ງກັນແລະກັນ" (ຂໍ້. 22). ແມ່ນເຈົ້າບໍ? ເຈົ້າຄິດວ່າແມ່ນຂ້ອຍບໍ່? ສິ່ງທີ່ເປັນໜ້າເສົ້າໃຈແລະບຸກຄົນທີ່ບໍ່ເຄີຍຈະຫັນປ່ຽນຈາກຄວາມບໍ່ຈົງຮັກພັກດີຂອງຕົນ. ລາວບໍ່ແມ່ນສາວົກຄົນດຽວໃນຫ້ອງນັ້ນທີ່ສາມາດຫັນກັບໄປຫາຜູ້ທີ່ນຳພາແລະຮັກພວກເຂົາ. ໃນທ້າຍບົດຮຽນນີ້. ພຣະເຢຊູໄດ້ບອກກັບເປໂຕວ່າລາວຈະປະຕິເສດພຣະອົງເຊັ່ນດຽວກັນ "ສາມເທື່ອ"(ຂໍ້.8). ຢູດາໄດ້ທໍລະຍົດຕໍ່ພຣະເຢຊູກ່ອນທີ່ພຣະອົງຈະຖືກຈັບກຸມ, ແລະເປໂຕໄດ້ປະຕິເສດພຣະອົງສາມຄັ້ງກ່ອນໄກ່ຂັນໃນຕອນເຊົ້າຂອງມື້ທີ່ມີການຈັບກຸມພຣະອົງ (ມັດທາຍ 26:69-75). ແຕ່ມັນບໍ່ໄດ້ຈົບລົງຢູ່ທີ່ນັ້ນ. ເມື່ອພຣະເຢຊູຖືກຈັບກຸມ "ພວກລູກສິດທັງປວງໄດ້ປະຖິ້ມພຣະອົງແລະໜີໄປ"( ຂໍ້ 56). ສິ່ງທັງໝົດເຫຼົ່ານີ້ອາດຊ່ວຍພວກເຮົາໃຫ້ເຂົ້າໃຈວ່າພວກເຮົາບໍ່ຈຳເປັນຕ້ອງມີຊື່ "ຢູດາ" ເພື່ອຈະບໍ່ຈົງຮັກພັກດີຕໍ່ພຣະເຢຊູ ຂໍ້ຄວາມນີ້ອາດຈະເຮັດໃຫ້ຫົວໃຈຂອງພວກເຮົາແຕກແຍກສຳລັບຊື່ຢູດາ, ແຕ່ມັນຄວນຈະເຮັດໃຫ້ພວກເຮົາຊອກຫາບ່ອນທີ່ກຽວຫຼຸ້ຍໃນຄວາມບໍ່ຈົງຮັກພັກດີຂອງພວກເຮົາເອງ.

## 2. ໂຢຮັນ 13:31-33

*31. ເມື່ອຢູດາອອກໄປແລ້ວພຣະເຢຊູຊົງກ່າວວ່າ, "ບັດນີ້ບຸດມະນຸດໄດ້ຮັບກຽດຕິຍົດແລ້ວ ແລະພຣະເຈົ້າກໍຊົງຮັບກຽດຕິຍົດເພາະບຸດມະນຸດ. 32. ຖ້າພຣະເຈົ້າຊົງຮັບກຽດຕິຍົດເພາະບຸດມະນຸດ ພຣະເຈົ້າຈະຊົງປະທານໃຫ້ບຸດມະນຸດມີກຽດຕິຍົດຮ່ວມກັບພຣະອົງ ແລະຈະຊົງໃຫ້ມີກຽດຕິຍົດໃນບັດນີ້. 33. ລູກນ້ອຍທັງຫລາຍເອີຍ, ເຮົາຍັງຈະຢູ່ກັບພວກເຈົ້າອີກໜ້ອຍນຶ່ງ ພວກເຈົ້າຈະຊອກຫາເຮົາແລະ, ເໝືອນກັບເຮົາໄດ້ບອກກັບພວກຢິວແລ້ວວ່າ 'ບ່ອນເຮົາຈະໄປນັ້ນພວກເຈົ້າໄປບໍ່ໄດ້', ບັດນີ້ເຮົາກໍບອກພວກເຈົ້າເໝືອນກັນ.*

ພວກເຮົາອາດຈະມີບັນຊີລາຍຊື່ທີ່ແຕກຕ່າງກັນ, ແຕ່ເມື່ອພວກເຮົາຄິດເຖິງຈຸດປ່ຽນອັນຍິ່ງໃຫ່ຍໃນປວັດສາດ, ພວກເຮົາອາດຈະຄິດເຖິງເຫດການເຊັ່ນ D-Day, ການລົ້ມລົງຂອງກຳແພງເບີລິນ, ແລະ 9/11. ຊ່ວງເວລາດັ່ງກ່າວກາຍເປັນປວັດສາດ, ແມ່ນບໍ່? ພວກເຮົາອາດຈະຕ້ອງການເພີ້ມເຕີມລາຍຊື່ເຂົ້າໄປໃນເຫດການຕ່າງໆໃນໂຢຮັນ 13. ໃຫ້ພິຈາຣະນາເບິ່ງພຽງແຕ່ຂໍ້ 31: "ບັດນີ້ບຸດມະນຸດໄດ້ຮັບກຽດຕິຍົດ, ແລະພຣະເຈົ້າໄດ້ຮັບກຽດຕິຍົດໃນພຣະອົງ." ຄືກັບທີ່ພຣະເຢຊູກ່າວວ່າ "ເຖິງເວລາແລ້ວ." ຢູດາໄດ້ອອກໄປແລະການກະທຳຂອງການທໍລະຍົດຂອງຢູດາກໍໄດ້ເລີ້ມຂຶ້ນໃນເວລານັ້ນ. ທຸກສິ່ງໄດ້ເຄື່ອນ

ໄປສູ່ເຫດການທີ່ຈະມາເຖິງພູຫົວກະໂຫຼກ. ການໄຖ່ໄດ້ເກີດຂຶ້ນຢ່າງລວດເລວ, ແລະເຖິງແມ່ນວ່າເວລາທີ່ຈະມາເຖິງຈະເບິ່ງຄືວ່າມືດມົວທີ່ສຸດສໍາລັບເຫຼົ່າສາວົກ, ແຕ່ພຣະເຈົ້າໄດ້ຮັບກຽດຕິຍົດທັງໝົດຜ່ານທາງເຫດການທັງໝົດນັ້ນ.

ອັຄສາວົກໂຢຮັນເລີ່ມຕົ້ນພຣະທັມໂຢຮັນດ້ວຍຖ້ອຍຄໍາອັນເລິກເຊິ່ງວ່າ: "ເມື່ອຕົ້ນເດີມນັ້ນພຣະຄໍາຊົງເປັນຢູ່ແລ້ວພຣະຄໍານັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະຄໍານັ້ນແຫລະ, ຊົງເປັນພຣະເຈົ້າ." ຣິດເດດອັນຍິ່ງໃຫຍ່ຂອງພຣະເຈົ້າເຮັດໃຫ້ທຸກສິ່ງທີ່ມີຢູ່ນັ້ນ. ພຣະເຈົ້າຊົງສ້າງສິ່ງສາລະພັດຂຶ້ນມາເພື່ອເປີດເຜີຍພຣະຣັສມີຂອງພຣະອົງໃຫ້ຮູ້ຈັກ. ແຕ່ໜ້າເສັຽດາຍ, ມະນຸດໄດ້ນໍາເອົາບາບເຂົ້າໄປໃນການທີ່ຊົງສ້າງທີ່ສົມບູນແບບຂອງພຣະເຈົ້າ. ມະນຸດໄດ້ເຮັດບາບແລະຮັກຄວາມບາບ.

ໃນໂຢຮັນ 13, ພຣະເຢຊູຮູ້ວ່າພຣະອົງໄດ້ກ້າວເດີນໄປຫາຄວາມຕາຍແລະການຟື້ນຄືນຊີວິດຂອງພຣະອົງທີ່ຈະນໍາໄປສູ່ການຟື້ນຟູຂອງທຸກສິ່ງທຸກຢ່າງ. ພຣະເຢຊູຮູ້ໃນລະຫ່ວາງພຣະທັມໂຢຮັນ 13 ແລະ ໂຢຮັນ 20(ເມື່ອພຣະອົງຈະເປັນຄືນມາຈາກຕາຍ) ພຣະອົງຈະປະສົບກັບຄວາມເຈັບປວດ, ຄວາມໂສກເສົ້າ, ແລະບາບຢ່າງຫຼວງຫຼາຍ. ແຕ່ພຣະເຢຊູຕ້ອງເຮັດເພາະພຣະອົງຮູ້ວ່າເຣື່ອງນັ້ນແມ່ນຫັຼງ. "ພຣະເຈົ້າຈະໃຫ້ກຽດພຣະອົງໃນພຣະອົງເອງແລະຈະໃຫ້ກຽດພຣະອົງໃນຄັ້ງດຽວ."

ພຣະເຢຊູເຮັດໃນສິ່ງທີ່ພຣະອົງເຮັດດ້ວຍຄວາມຮັກຕໍ່ພວກເຮົາແລະເພື່ອຄວາມສະງ່າຣາສີຂອງພຣະເຈົ້າ. ພວກເຮົາຕ້ອງເຮັດໃຫ້ກຽດສັກສີຂອງພຣະເຈົ້າເປັນ "ເຫດຜົນ" ທີ່ຢູ່ເບື້ອງຫຼັງທຸກສິ່ງທີ່ເຮົາເຮັດໃນຊີວິດຂອງເຮົາເອງ. ພຣະເຈົ້າຜູ້ຊົງຣິດອໍານາດທັງປວງ, ຊົງຮູ້ທັງໝົດ, ພຣະອົງຊົງສ້າງພວກເຮົາເພື່ອສະງ່າຣາສີຂອງພຣະອົງໄດ້ສົ່ງພຣະບຸດຂອງພຣະອົງໃຫ້ມາໄຖ່, ຊ່ອຍກູ້, ແລະໃນພວກເຮົາໃຫ້ຄືນມາສູ່ສິ່ງທີ່ພຣະອົງຊົງສ້າງໄວ້ໃຫ້ກັບພວກເຮົາ. ນັ້ນເປັນວຽກງານຂອງພຣະເຢຊູທີ່ເຮັດໃນຊີຂອງພວກເຮົາທຸກຄົນເພື່ອພຣະສາຍາຂອງພຣະອົງ. ເມື່ອພວກເຮົາຕິດຕາມພຣະຄຣິດແລະມີຊີວິດຢູ່ເພື່ອພຣະສາຍາຂອງພຣະອົງ, ພວກເຮົາພົບເຫັນວ່າຄວາມສໍາເຣັດ, ຈຸດປະສົງ, ແລະຄວາມພໍພຣະທັຍທີ່ຍິ່ງໃຫ່ຽທີ່ສຸດ. ຣັສມີພາບອັນຍິ່ງໃຫ່ຽທີ່ສຸດຂອງພຣະອົງແມ່ນຄວາມຊື່ນຊົມຍິນດີອັນຍິ່ງໃຫ່ຽທີ່ສຸດຂອງພວກເຮົາ.

## 3. ໂຢຮັນ 13:34-35

*34. ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫລາຍຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນແລະກັນດ້ວຍຢ່າງນັ້ນ. 35. ຖ້າເຈົ້າທັງຫລາຍມີຄວາມຮັກເຊິ່ງກັນແລະກັນ ດັ່ງນີ້ແຫລະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫລາຍເປັນສາວົກຂອງເຮົາ."*

ສື່ມວນຊົນສັງຄົມອາດມີຜົນປະໂຍດບາງຢ່າງ, ແຕ່ມັນຍັງເປັນສະຖານທີ່ແຫ່ງຄວາມມືດ. ຖ້າຂ້າພະເຈົ້າກໍາລັງຊອກຫາການຊູໃຈ, ບໍ່ວ່າຈະເປັນເຟສບຸກ, ທວິດເຕີ, ຫຼືອິນສຕາ ກແຣມແມ່ນທາງເລືອກທໍາອິດຂອງຂ້າພະເຈົ້າ. ພວກເຮົາອາສັຍຢູ່ໃນໂລກທີ່ແຕກຫັກທາງດ້ານສັງຄົມ. ສັງຄົມຮຽກຮ້ອງຕ້ອງການຄວາມຮັກຫຼາຍກ່ວາທີ່ພວກເຮົາສາມາດນໍາສເນີມັນອອກມາ. ໂລກນີ້ມັນອາດສາມາດໂຫດຫ້ຽມຫຼາຍ.

ໃນທາງກົງກັນຂ້າມ, ພຣະເຢຊູໄດ້ມອບໝາຍງານຂອງພຣະອົງໃຫ້ສໍາລັບທຸກໆວັດທະນະທັມແລະທຸກເວລາ, ແຕ່ໃນທຸກວັນນີ້ໄດ້ມີການແບ່ງແຍກແລະຂັດແຍ້ງກັນ, ບໍ່ມີການກະຕຸ້ນຄວາມສົນໃຈໃນຄໍາສັ່ງຂອງພຣະຄຣິດທີ່ສັ່ງໃຫ້ຮັກເຊິ່ງກັນແລະກັນ. "ເຮົາໃຫ້ບັນຍັດໃໝ່ໄວ້ແກ່ເຈົ້າທັງຫລາຍຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນແລະກັນດ້ວຍຢ່າງນັ້ນ." ນີ້ແມ່ນເປັນຄັ້ງທໍາອິດທີ່ພວກເຮົາເຫັນພຣະເຢຊູໃຊ້ຄໍາວ່າ "ໃໝ່" ໃນພຣະທັມໂຢຮັນ, ມັນໄດ້ຊີ້ໃຫ້ເຫັນຄວາມສໍາຄັນຂອງຄວາມປາຖນາຂອງພຣະເຢຊູສໍາລັບສາວົກຂອງພຣະອົງທີ່ຈະສະແດງຄວາມຮັກ. ອັນນີ້ມັນຄືກັນກັບວ່າພຣະເຢຊູກໍາລັງເວົ້າວ່າພຣະອົງມີເປົ້າໝາຍໃໝ່ທີ່ເປັນເອກະລັກໃຫ້ກັບໂລກ. ໃນຄວາມເປັນຈິງແລ້ວ, ມັນເປັນເປົ້າໝາຍທີ່ຮຽກຮ້ອງໃຫ້ຜູ້ຕິດຕາມພຣະອົງເປັນອັນນຶ່ງອັນດຽວກັນໃນຄວາມຮັກ. ຄວາມຮັກດັ່ງທີ່ພຣະເຢຊູໄດ້ເອີ້ນໃຫ້ຫັນກັບຄືນ

ມາຢູ່ໃນຈຸດດຽວຂອງພຣະອົງ. "ດ້ວຍຄວາມຮັກເຊິ່ງກັນແລະກັນດັ່ງນີ້ແຫລະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫລາຍເປັນສາວົກຂອງເຮົາ."

ຄວາມຮັກ, ເຫດຜົນ, ບໍ່ແມ່ນຄວາມຄິດໃໝ່ໃນພຣະຄັມພີ. ພຣະຄັມພີເດີມໄດ້ສັ່ງໃຫ້ປະຊາກອນຂອງພຣະເຈົ້າຮັກກັນເຊັ່ນດຽວກັນນີ້. "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ" (ເລວີ 19:18). "ຈົ່ງຮັກພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າດ້ວຍສຸດໃຈຂອງເຈົ້າ, ດ້ວຍສຸດຄວາມຄິດຂອງເຈົ້າ, ແລະດ້ວຍສຸດກໍາລັງຂອງເຈົ້າ" (ພຣະບັນຍັດສອງ 6:5). ຄວາມຮັກບໍ່ແມ່ນຄວາມໃໝ່ໃນຕົວມັນເອງ, ແຕ່ແມ່ນຄວາມເລິກຄວາມກ້ວາງຂອງຄວາມຮັກແລະແຮງຈູງໃຈທີ່ຢູ່ເບື້ອງຫຼັງ. ພຣະເຢຊູປ່ຽນແປງທຸກສິ່ງທຸກຢ່າງ, ແມ່ນແຕ່ຄວາມຮັກ.

ພຣະເຢຊູໄດ້ຊີ້ຄວາມຈົງຮັກພັກດີຂອງພວກເຮົາໃນວິທີທີ່ໜ້າປລາດໃຈທີ່ສຸດ. ພຣະເຈົ້າ, ໃນຮູບຮ່າງຂອງມະນຸດ, ໄດ້ຮັບການທໍຣະມານ, ຂ້າ, ແລະໄດ້ຖືກຍົກຂຶ້ນມາສໍາລັບພວກເຮົາ-ຜູ້ທີ່ຮັກພຣະອົງ. ໃນຖານະທີ່ພວກເຮົາເປັນລູກແລະເປັນຜູ້ຕິດຕາມຂອງພຣະອົງໃນເວລານີ້, ຈົ່ງສວມໃສ່ເປັນຊ່ອງທາງແຫ່ງຄວາມຮັກຂອງພຣະອົງ, ໃຫ້ຄວາມຮັກຂອງພຣະອົງໄຫຼຜ່ານຊີວິດຂອງພວກເຮົາໄປສູ່ອ້າຍເອື້ອຍນ້ອງຂອງພວກເຮົາໃນພຣະຄຣິດ. ເມື່ອພວກເຮົາຮັກກັນດັ່ງທີ່ພຣະອົງຮັກ, ໂລກຈະໄດ້ເຫັນແລະຮັບຮູ້. ຄວາມຮັກດັ່ງທີ່ພຣະຄຣິດຮັກນັ້ນໄດ້ຊີ້ໃຫ້ໂລກເຫັນຜູ້ທີ່ເຮົາຕິດຕາມ.

## ການນໍາໃຊ້ໃນຊີວິດ

ການເຊື່ອມຕໍ່ກັບພຣະຄຣິດແມ່ນຮຽກຮ້ອງໃຫ້ມີຄວາມຈົງຮັກພັກດີຢ່າງສະໝໍ່າສະເໝີ. ຈົ່ງເລືອກນຶ່ງໃນການນໍາໃຊ້ໃນຊີວິດຕໍ່ລົງໄປນີ້.

❖ **ຈົ່ງຖາມ.** ຂໍໃຫ້ພຣະເຈົ້າສໍາແດງໃຫ້ທ່ານເຫັນສ່ວນທີ່ຢູ່ໃນຈິດໃຈຂອງທ່ານທີ່ຍັງບໍ່ຈົງຮັກພັກດີຕໍ່ພຣະອົງ.ຈົ່ງກັບໃຈ, ແລ້ວພຣະອົງຈະໃຫ້ອະພັຍທ່ານ.

❖ **ຈົ່ງທ່ອງຈໍາ.** ເລືອກບົດຮຽນທີ່ກ່ຽວກັບພຣະລັກສະນະຂອງພຣະເຈົ້າແລະທ່ອງຈໍາເອົາໄວ້ໃນອາທິດນີ້. ຂໍ້ທີ່ຄວນນໍາໄປພິຈາລະນາຄື: ໂຢຮັນ 1:14; 2 ໂກລິນໂທ 4:6; ເພງສັນລະເສີນ 19:1; ຟີລິບປອຍ 2:10-11.

❖ **ຈົ່ງໜູນນໍ້າໃຈ.** ຖ້າທ່ານແບ່ງປັນໃນສື່ສັງຄົມ, ພິຈາລະນາໃນການນໍາສະເໜີກ່ຽວກັບເຣື່ອງອ້າຍເອື້ອຍນ້ອງໃນພຣະຄຣິດ, ແບ່ງປັນໃຫ້ເຫັນການທີພວກເຂົາໄດ້ຮັກທ່ານ, ໄດ້ໜູນໃຈທ່ານ, ຫຼືຊ່ວຍທ່ານໃຫ້ຈົງຮັກພັກດີຕໍ່ພຣະຄຣິດຫຼາຍຂຶ້ນ. ຫຼືທ່ານສາມາດຂຽນຂໍ້ຄວາມໃຫ້ເຂົາເຈົ້າໄດ້ອ່ານ.

ພວກເຮົາບໍ່ຈໍາເປັນຕ້ອງມີຊື່ວ່າ "ຢູດາ" ເພື່ອຈະບໍ່ເປັນຜູ້ທີ່ບໍ່ຈົງຮັກພັກດີຕໍ່ພຣະເຢຊູ. ຂໍໃຫ້ພວກເຮົາອະທິຖານເພື່ອໃຫ້ພວກເຮົາອຸທິດຕົນສັດຊື່ຕໍ່ພຣະເຢຊູຢ່າງສະໝໍ່າສະເໝີໃນຊີວິດຂອງພວກເຮົາ ເພາະພຣະອົງໄດ້ສັດຊື່ທ່ຽງທັມຕໍ່ພວກເຮົາຢ່າງສະໝໍ່າສະເໝີ. ພວກເຮົາສາມາດຈົງຮັກພັກດີຕໍ່ພຣະເຢຊູໄດ້ຕໍ່ເມື່ອເຮົາເດີນໄປກັບພຣະອົງຢ່າງໃກ້ຊິດ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ https://ulsb.org/sunday-school-2/ ແປໂດຍ VR.